I.5

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

໑໐໐໐໐໐໐໐*****໐໐໐໐໐໐໐

ສຳນັກງານນາຍົກລັດຖະມົນຕີ

ເລກທີ 017 / ນຍ

ນະຄອນຫລວງວຽງຈັນ, ວັນທີ 11/5/2009

ກະຊວງອຸດສາຫະກຳ ແລະ ການຄ້າ
ເລກທີ: 1135
ວັນທີ: 13/5/09

# ຄຳສັ່ງ

## ຂອງນາຍົກລັດຖະມົນຕີແຫ່ງ ສປປ ລາວ

## ວ່າດ້ວຍການກວດກາ ແລະ ມາດຕະການ ຕໍ່ຜູ້ທີ່ນຳເຂົ້າຍານພາຫະນະທຸກປະເພດ ແບບບໍ່ຖືກຕ້ອງ ແລະ ນຳໃຊ້ບໍ່ຖືກເປົ້າໝາຍ

ເຖິງ : ບັນດາລັດຖະມົນຕີວ່າການ, ຫົວໜ້າອົງການທຽບເທົ່າກະຊວງ, ເຈົ້າຄອງນະຄອນຫລວງວຽງຈັນ ແລະ ເຈົ້າແຂວງໃນທົ່ວປະເທດ.

- ອີງຕາມ ມາດຕາ 12 ຂອງກົດໝາຍວ່າດ້ວຍ ລັດຖະບານ ແຫ່ງ ສປປ ລາວ ສະບັບເລກທີ 02/ສພຊ, ລົງວັນທີ 06 ພຶດສະພາ 2003 ;
- ອີງຕາມ ກົດໝາຍວ່າດ້ວຍພາສີ ( ສະບັບປັບປຸງ ) ສະບັບເລກທີ 05/ສພຊ, ວັນທີ 20 ພຶດສະພາ 2005 ;
- ອີງຕາມ ດຳລັດຂອງນາຍົກລັດຖະມົນຕີແຫ່ງ ສປປ ລາວ ວ່າດ້ວຍການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍພາສີ ສະບັບເລກທີ 362/ນຍ, ວັນທີ 19 ຕຸລາ 2007.

ໃນໄລຍະຜ່ານມາບັນດາຂະແໜງການກ່ຽວຂ້ອງ ຂັ້ນສູນກາງ ແລະ ທ້ອງຖິ່ນ ໄດ້ຈັດຕັ້ງປະຕິບັດກົດໝາຍວ່າດ້ວຍພາສີ ແລະ ລະບຽບກົດໝາຍອື່ນທີ່ກ່ຽວຂ້ອງຢ່າງຕັ້ງໜ້າພໍສົມຄວນ, ເປັນຕົ້ນແມ່ນໄດ້ເອົາໃຈໃສ່ສະກັດກັ້ນ ແລະ ແກ້ໄຂເດັດຂາດພໍສົມຄວນຕໍ່ການຄ້າຂາຍເຖື່ອນ ກໍຄືການນຳເຂົ້າຍານພາຫະນະແບບບໍ່ຖືກຕ້ອງໃນຮູບແບບຕ່າງໆ, ຊ່ວຍໃຫ້ລັດສາມາດເກັບພາສີ-ອາກອນ ໄດ້ເພີ່ມຂຶ້ນ ແລະ ເຮັດໃຫ້ການນຳລົດເຂົ້າມາແບບບໍ່ຖືກຕ້ອງຫລຸດລົງໃນລະດັບໜຶ່ງ ;

ເຖິງຢ່າງໃດກໍດີສະພາບການຄ້າຂາຍເຖື່ອນ, ການຫລົບຫລີກພາສີ ຈາກການນຳເຂົ້າຍານພາຫະນະຕ່າງໆ ເຊັ່ນ : ລົດຈີບ, ລົດເກັງ, ລົດກະບະ, ລົດຕູ້ ແລະ ລົດຈັກ ກໍຍັງມີລັກສະນະແຜ່ຫລາຍຢູ່ທ້ອງຖິ່ນຕ່າງໆ ;

ເພື່ອແກ້ໄຂປະກົດການຫຍໍ້ທໍ້ດັ່ງກ່າວ ແລະ ເພື່ອເຮັດໃຫ້ການນຳເຂົ້າ ແລະ ການດຳເນີນທຸລະກິດ ຊື້-ຂາຍ ຍານພາຫະນະ ເປັນໄປຕາມລະບຽບກົດໝາຍ ;

**ນາຍົກລັດຖະມົນຕີແຫ່ງ ສປປ ລາວ ອອກຄຳສັ່ງ :**

1. ໃຫ້ທຸກກະຊວງ, ອົງການຂອງລັດຖະບານ ແລະ ອຳນາດການປົກຄອງທ້ອງຖິ່ນທຸກຂັ້ນ ເພີ່ມຄວາມເອົາໃຈໃສ່ໃນການສະກັດກັ້ນ ແລະ ແກ້ໄຂບັນຫາການນຳເຂົ້າຍານພາຫະນະແບບບໍ່ຖືກຕ້ອງ ແລະ ນຳໃຊ້ບໍ່ຖືກເປົ້າໝາຍຢູ່ພາຍໃນກະຊວງ, ອົງການ ແລະ ຂອບເຂດພື້ນທີ່ການປົກຄອງ ແລະ ຄຸ້ມຄອງຂອງຕົນ. ຖ້າພົບກໍລະນີມີການນຳເຂົ້າຍານພາຫະນະແບບບໍ່ຖືກຕ້ອງ ທັງໃນດ່ານ ແລະ ນອກດ່ານທຸກຮູບແບບ ກໍໃຫ້ດຳເນີນການຕາມລະບຽບກົດໝາຍຢ່າງເຂັ້ມງວດຕໍ່ບຸກຄົນ ແລະ ນິຕິບຸກຄົນ ທີ່ກ່ຽວຂ້ອງ. ສະເພາະພະນັກງານ ແລະ ເຈົ້າໜ້າທີ່ຂອງລັດທີ່ມີສ່ວນກ່ຽວຂ້ອງ ກໍໃຫ້ດຳເນີນຕາມລະບຽບກົດໝາຍເຊັ່ນດຽວກັນ ແລະ ໃຫ້ປະຕິບັດມາດຕະການຕ່າງໆຕາມລະບຽບລັດຖະກອນຢ່າງເຄັ່ງຄັດ.

2. ໃຫ້ຍຸບເລີກ ແລະ ຢຸດຕິການເຄື່ອນໄຫວຂອງຄະນະກຳມະການແກ້ໄຂລົດນຳເຂົ້າແບບບໍ່ຖືກຕ້ອງທີ່ຖືກແຕ່ງຕັ້ງໃນເມື່ອກ່ອນ ທັງຢູ່ສູນກາງ ແລະ ທ້ອງຖິ່ນ ພ້ອມທັງສະຫລຸບບັນຊີລົດນຳເຂົ້າແບບບໍ່ຖືກຕ້ອງທີ່ໄດ້ແກ້ໄຂແລ້ວ ແລະ ລົດທີ່ຍັງບໍ່ທັນແກ້ໄຂ ແລ້ວມອບໃຫ້ກະຊວງການເງິນ ເປັນຜູ້ສືບຕໍ່ແກ້ໄຂຕາມລະບຽບກົດໝາຍ.

3. ໃຫ້ຂະແໜງການທີ່ກ່ຽວຂ້ອງທັງຢູ່ສູນກາງ ແລະ ທ້ອງຖິ່ນເອົາໃຈໃສ່ດຳເນີນການກວດກາຍານພາຫະນະທີ່ນຳເຂົ້າ ສປປ ລາວ ໃນໄລຍະຜ່ານມາໂດຍສະເພາະແມ່ນ : ລົດເສຍພາສີ-ອາກອນ 1% ; ລົດນຳເຂົ້າຊົ່ວຄາວ ; ລົດຕິດປ້າຍທົດລອງ ; ລົດນຳເຂົ້າຕາມນະໂຍບາຍ ດຳລັດ ສະບັບເລກທີ 71/ນຍ, ລົງວັນທີ 28 ພຶດສະພາ 2002 ; ລົດນຳເຂົ້າຍົກເວັ້ນພາສີຕາມໂຄງການຕ່າງໆ ແລະ ຍານພາຫະນະທີ່ນຳເຂົ້າໃນຮູບແບບອື່ນໆ ຊຶ່ງໄດ້ຮັບນະໂຍບາຍຜ່ອນຜັນດ້ານພາສີ-ອາກອນ ຈາກລັດຖະບານ. ໃນກໍລະນີພົບເຫັນມີການລະເມີດລະບຽບກົດໝາຍເປັນຕົ້ນ : ການຊື້-ຂາຍ, ການອອກທະບຽນປ້າຍ, ການໂອນໃຫ້ບຸກຄົນ ຫລື ນິຕິບຸກຄົນ ແບບບໍ່ຖືກຕ້ອງ ແລະ ການນຳໃຊ້ບໍ່ຖືກຕາມເປົ້າໝາຍໃຫ້ປະຕິບັດມາດຕະການຕ່າງໆຕໍ່ຜູ້ກະທຳຜິດຕາມລະບຽບກົດໝາຍຢ່າງເຂັ້ມງວດ.

4. ຫ້າມອົງການປົກຄອງທຸກຂັ້ນ ນັບແຕ່ສູນກາງລົງຮອດທ້ອງຖິ່ນ ຕົກລົງຍົກເວັ້ນ ຫລື ຫລຸດຜ່ອນພາສີ, ອາກອນ ແລະ ຄ່າທຳນຽມຕ່າງໆ ; ຕົກລົງຫລຸດຜ່ອນມູນຄ່າແຈ້ງພາສີ ; ຮັບຮອງເອົາການແຈ້ງເຕັກນິກຂອງລົດບໍ່ຖືກຕາມສະພາບຕົວຈິງ ຫລື ນຳໃຊ້ວິທີການຕ່າງໆ ເພື່ອໃຫ້ໄດ້ເສຍພາສີ-ອາກອນ ຖືກລົງ, ຜູ້ລະເມີດຈະຖືກປະຕິບັດວິໄນຕາມລະບຽບລັດຖະກອນ ແລະ ຖືກດຳເນີນຄະດີຕາມລະບຽບກົດໝາຍ.

5. ບັນດາລັດຖະມົນຕີວ່າການ, ຫົວໜ້າອົງການທຽບເທົ່າກະຊວງ, ຫົວໜ້າທະບວງ, ຫົວໜ້າອົງການທຽບເທົ່າທະບວງ, ເຈົ້າຄອງນະຄອນຫລວງວຽງຈັນ, ເຈົ້າແຂວງ ມີໜ້າທີ່ຈັດຕັ້ງປະຕິບັດຄຳສັ່ງສະບັບນີ້ ຕາມໜ້າທີ່ຂອງໃຜລາວຢ່າງເຂັ້ມງວດ.

6. ຜ່ານການຈັດຕັ້ງປະຕິບັດໄດ້ຮັບຜົນ ແລະ ພົບຂໍ້ຫຍຸ້ງຍາກແນວໃດນັ້ນ ໃຫ້ຂະແໜງການກ່ຽວຂ້ອງສະຫຼຸບລາຍງານໃຫ້ທ່ານນາຍົກລັດຖະມົນຕີຊາບ.

7. ຄຳສັ່ງສະບັບນີ້ ມີຜົນບັງຄັບໃຊ້ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ. ບັນດາຄຳສັ່ງ, ຂໍ້ຕົກລົງ ແລະ ນິຕິກຳຕ່າງໆ ລວມທັງຂອງອຳນາດການປົກຄອງທ້ອງຖິ່ນ ທີ່ອອກໃນຜ່ານມາ ຊຶ່ງຂັດກັບລະບຽບກົດໝາຍ ແລະ ຄຳສັ່ງສະບັບນີ້ ລ້ວນແຕ່ຖືກລົບລ້າງ.

ນາຍົກລັດຖະມົນຕີ ແຫ່ງ ສປປ ລາວ

ບົວສອນ ບຸບຜາວັນ